ສໍານັກງານໃຫຍ່

ເລກທີ: 44 /ທຄຕລ ...2022...

ນະຄອນຫຼວງວຽງຈັນ, ວັນທີ: ...22 NOV 2022...

**ມະຕິ**

**ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈໍາປີ 2022.**

**ວັນທີ 22/11/2022**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈໍາປີ 2022 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:35 ໂມງ ຂອງວັນທີ 22 ພະຈິກ 2022 ທີ່ ສໍານັກງານໃຫຍ່ ທຄຕລ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄໍາສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈໍານວນ 16 ທ່ານ, ຜູ້ມອບສິດຈໍານວນ 145 ທ່ານ ຊຶ່ງລວມຈໍານວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 152.435.111 ຮຸ້ນ, ນັບທັງ 929.531 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 73,384% ຂອງຈໍານວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດໍາເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສໍາລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈໍານວນ 55.288.189 ຮຸ້ນ ເທົ່າກັບ 26,616% ຂອງຈໍານວນຮຸ້ນ ທຄຕລ ທັງໝົດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

**ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2021**

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 152.435.111 ສຽງ, ເທົ່າກັບ 100 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ: 0 ສຽງ, ເທົ່າກັບ 0 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ຮັບຊາບຕໍ່ລາຍງານການດໍາເນີນງານຂອງ ທຄຕລ ໄລຍະ 9 ເດືອນ ປີ 2022**

**ໝາຍເຫດ:** ວາລະນີ້ ເປັນພຽງການລາຍງານເພື່ອຮັບຊາບເທົ່ານັ້ນ, ບໍ່ມີການລົງຄະແນນສຽງ.

**ວາລະທີ 3: ຮັບຊາບຕໍ່ກັບການແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ ເປັນຜູ້ອໍານວຍການ ທຄຕລ.**

**ໝາຍເຫດ:** ວາລະນີ້ ເປັນພຽງການລາຍງານເພື່ອຮັບຊາບເທົ່ານັ້ນ, ບໍ່ມີການລົງຄະແນນສຽງ.



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**ວາລະທີ 4: ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານປ່ຽນແທນຕຳແໜ່ງທີ່ວ່າງ:**

1. ຮັບຮອງ ແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ເປັນສະມາຊິກສະພາບໍລິຫານ ທຄຕລ;
2. ສຳລັບການແຕ່ງຕັ້ງປະທານສະພາບໍລິຫານ ຜູ້ທີ່ຈະມາແທນທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ທີ່ການຈັດຕັ້ງຂັ້ນເທິງພວມດຳເນີນການຄົ້ນຄວ້າຢູ່ ກອງປະຊຸມ ໄດ້ມອບອຳນາດໃຫ້ສະພາບໍລິຫານໃນການພິຈາລະນາຮັບຮອງການແຕ່ງຕັ້ງ ພາຍຫຼັງທີ່ໄດ້ຮັບຂໍ້ຕົກລົງຈາກກະຊວງການເງິນ ແລ້ວທຳການເປີດເຜີຍຂໍ້ມູນຕາມລະບຽບການ;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 152.435.111 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5: ພິຈາລະນາ ແລະ ຮັບຮອງການປັບປຸງນະໂຍບາຍນ້ຳມັນທຽວການສຳລັບພະນັກງານ ທຄຕລ ໂດຍປັບປຸງນະໂຍບາຍນ້ຳມັນຈາກການກຳນົດຈຳນວນເງິນເດັດຖານ ມາເປັນ ຈຳນວນລິດສຳລັບແຕ່ລະຕຳແໜ່ງງານ ໂດຍຖືເອົາລາຄານ້ຳມັນແອັດຊັງທຳມະດາທີ່ລັດກຳນົດໃນແຕ່ລະໄລຍະ.**

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 152.435.111 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ**

**ຄຳສຸກ ສູນດາລາ**